ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 1936/ຜ-ຟຟລ
ນະຄອນຫຼວງວຽງຈັນ, ວັນທີ 25 ສິງຫາ 2020

# <u>ໃບລາຍງານ</u>

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການ ຄຸ້ມຄອງຫຼັກຊັບ
ຜູ້ອຳນວຍການໃຫຍ່ ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ ທີ່ນັບຖື,

ເລື່ອງ: ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 3/2020.

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (“ບໍລິສັດ”) ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 3/2020 ວັນທີ 24 ສິງຫາ 2020, ດັ່ງມີລາຍລະອຽດລຸ່ມນີ້:

1. ຮັບຮອງບົດລາຍງານການດຳເນີນທຸລະກິດ ລວມທັງລາຍງານການເງິນ ຂອງບໍລິສັດ 06 ເດືອນຕົ້ນປີ 2020 (01/01/2020-30/06/2020), ເຊິ່ງຜູ້ກວດສອບບັນຊີພາຍນອກໄດ້ມີການທົບທວນແລ້ວ ແລະ ໃຫ້ນຳເລື່ອງນີ້ ລາຍງານຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020 ເພື່ອພິຈາລະນາຮັບຮອງ.
2. ອະນຸມັດບໍ່ຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ຂອງ ບໍລິສັດ 06 ເດືອນຕົ້ນປີ 2020 (01/01/2020-30/06/2020) ເນື່ອງມາຈາກສະພາບອາກາດໃນລະດູຝົນບໍ່ເອື້ອອຳນວຍ, ແຫ້ງແລ້ງ, ຝົນບໍ່ຕົກຖືກຕາມລະດູການ ສົ່ງຜົນເຮັດໃຫ້ບໍ່ມີນ້ຳພຽງພໍເຂົ້າໃນການຜະລິດພະລັງງານໄຟຟ້າ ແລະ ເຮັດໃຫ້ການຜະລິດບໍ່ໄດ້ຕາມແຜນການທີ່ວາງໄວ້; ລວມທັງການຜະລິດ ຂອງບັນດາເຂື່ອນຜູ້ຜະລິດໄຟຟ້າເອກະລາດ ທີ່ບໍລິສັດເຂົ້າຖືຮຸ້ນ ກໍ່ບໍ່ສາມາດຜະລິດພະລັງງານໄຟຟ້າໄດ້ຕາມແຜນການ. ດັ່ງນັ້ນ, ຈຶ່ງສົ່ງຜົນກະທົບໃຫ້ບໍລິສັດ ຂາດທຶນເປັນຈຳນວນເງິນ 15,53 ຕື້ກີບ. ແລະ ໃຫ້ນຳເລື່ອງນີ້ລາຍງານຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ເພື່ອພິຈາລະນາອະນຸມັດ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືເປັນຢ່າງສູງ,

**<u>ກຳມະການສະພາບໍລິຫານ/ຜູ້ອຳນວຍການໃຫຍ່</u>**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company ນະຄອນຫຼວງວຽງຈັນ

ດວງສີ ພາຣາຍົກ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ,ເມືອງສີສັດຕະນາກ,ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ. ນ. 2392
ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la,ເວັບໄຊທ໌:www.edlgen.com.la